# ທອງຄຳ
# ບໍລິສຸດ

ສະບັບພະຄໍາພີທີ່ໃຊ້ແລະລິຂະສິດ.
ຕົວຢ່າງ:
"ພຣະຄໍາພີທີ່ເອົາມາຈາກ New King James Version®.
ສະຫງວນລິຂະສິດ © 1982 ໂດຍ Thomas Nelson, Inc.
ໃຊ້ໂດຍການອະນຸຍາດ. ສະຫງວນສິດທັງໝົດ."

# ຄໍາສັບຕ່າງໆຈາກຄໍາພີໄບເບິນ, ພຣະຄໍາພີບໍລິສຸດ, ພຣະຄໍາຂອງພຣະເຈົ້າ.

Edition 2024
© by GBV
printed in Germany

**GBV Dillenburg GmbH**
Eiershäuser Straße 54
35713 Eschenburg
GERMANY
www.gbv-dillenburg.de
www.gbv-online.org

ເມື່ອຕົ້ນເດີມນັ້ນພຣະ
ທຳດຳລົງຢູ່ ແລະ
ພຣະທຳຢູ່ກັບພຣະເຈົ້າ,
ແລະ ພຣະທຳເປັນພຣະເຈົ້າ.

*ໂຢຮັນ 1:1*

ໃນພຣະອົງຄືຊີວິດ ແລະ ຊີວິດນັ້ນ
ເປັນຄວາມສະຫວ່າງຂອງມະນຸດ.

*ໂຢຮັນ 4:4*

ເມື່ອພຣະເຢຊູເຈົ້າໄດ້ກ່າວ
ກັບປະຊາຊົນອີກ,
ພຣະອົງກ່າວວ່າ, “ເຮົານີ້ແຫລະ
ເປັນຄວາມສະຫວ່າງຂອງໂລກ.
ຜູ້ໃດກໍຕາມທີ່ຕາມເຮົາມາຈະບໍ່
ເດີນໃນຄວາມມືດ,
ແຕ່ຈະມີຄວາມສະ
ຫວ່າງແຫ່ງຊີວິດ”.

*ໂຢຮັນ 8:12*



ພຣະເຢຊູເຈົ້າຕອບວ່າ,
“ເຮົານີ້ແຫລະເປັນທາງນັ້ນ
ເປັນຄວາມຈິງ
ແລະ ເປັນຊີວິດ.
ບໍ່ມີຜູ້ໃດມາເຖິງພຣະ
ບິດາເຈົ້າໄດ້ນອກຈາກ
ມາທາງເຮົາ.

*ໂຢຮັນ 14:6*

ໃນວັນສຸດທ້າຍ ແລະ
ເປັນວັນສຳຄັນທີ່ສຸດ
ຂອງເທດສະການ,
ພຣະເຢຊູເຈົ້າໄດ້ຢືນຂຶ້ນ ແລະ
ກ່າວດ້ວຍສຽງດັງວ່າ,
"ຖ້າຜູ້ໃດຫິວນ້ຳໃຫ້ມາຫາເຮົາ
ແລະ ດື່ມ. ດັ່ງທີ່ມີຄຳຂຽນໄວ້
ໃນພຣະຄຳພີວ່າ,
ຜູ້ໃດກໍຕາມທີ່ເຊື່ອໃນເຮົາ
ແມ່ນ້ຳແຫ່ງຊີວິດຈະໄຫລອອກມາ
ຈາກພາຍໃນພວກເຂົາ"

*ໂຢຮັນ 7:37-38*



"ບັນດາຜູ້ທີ່ອິດເມື່ອຍ
ແລະ ແບກພາລະໜັກຈົ່ງມາຫາ
ເຮົາ ແລະ ເຮົາຈະໃຫ້ພວກເຈົ້າ
ໄດ້ຮັບຄວາມເຊົາເມື່ອຍ.

*ມັດທາຍ 11:28*

"ເພາະແອກຂອງເຮົານັ້ນກໍພໍ
ເໝາະ ແລະ ພາລະຂອງເຮົາກໍເບົາ".

*ມັດທາຍ 11:30*

"ຂ້າແດ່ພຣະເຈົ້າ,
ຂໍພຣະອົງເມດຕາຂ້ານ້ອຍ
ຜູ້ເປັນຄົນບາບດ້ວຍ'.

*ລູກາ 18:13*

ເພາະຄ່າຕອບແທນຂອງ
ຄວາມບາບກໍຄືຄວາມຕາຍ,
ແຕ່ຂອງປະທານທີ່ມາຈາກ
ພຣະເຈົ້າກໍຄືຊີວິດນິລັນດອນ
ໃນພຣະເຢຊູຄຣິດເຈົ້າ
ອົງພຣະຜູ້ເປັນເຈົ້າ
ຂອງພວກເຮົາ.

*ໂຣມ 6:23*



ພຣະເຢຊູເຈົ້າຕອບວ່າ,
"ເຮົາບອກເຈົ້າຕາມຄວາມຈິງວ່າ,
ບໍ່ມີຜູ້ໃດສາມາດເຫັນ
ອານາຈັກຂອງພຣະເຈົ້າໄດ້
ຖ້າພວກເຂົາບໍ່ບັງເກີດໃໝ່".

*ໂຢຮັນ 3:3*

ຢ່າປະຫລາດໃຈທີ່
ເຮົາບອກເຈົ້າວ່າ,
ເຈົ້າຈຳເປັນຕ້ອງບັງເກີດໃໝ່.

*ໂຢຮັນ 3:7*

ດັ່ງນັ້ນ, ຈົ່ງຖິ້ມໃຈເກົ່າເອົາໃຈໃໝ່ ແລະ ຫັນຄືນມາຫາພຣະເຈົ້າ, ເພື່ອວ່າ ບາບທັງຫລາຍຂອງພວກທ່ານຈະຖືກ ລຶບລ້າງອອກໄປ, ເວລາແຫ່ງຄວາມ ສົດຊື່ນຈະມາຈາກອົງພຣະຜູ້ເປັນເຈົ້າ,

*ກິດຈະການ 3:19*

ຖ້າພວກເຮົາສາລະພາບບາບ ທັງຫລາຍຂອງພວກເຮົາ, ພຣະອົງ ສັດຊື່ ແລະ ທ່ຽງທຳຈະອະໄພບາບ ຂອງພວກເຮົາ ແລະ ຊຳລະພວກເຮົາ ໃຫ້ພົ້ນຈາກຄວາມອະທຳທັງໝົດ.

*1 ໂຢຮັນ 1:9*



ແຕ່ສ່ວນບັນດາ ຜູ້ທີ່ຕ້ອນຮັບພຣະອົງ ຄືຜູ້ທີ່ເຊື່ອໃນນາມຂອງພຣະອົງ, ພຣະອົງກໍໃຫ້ສິດເປັນ ບຸດຂອງພຣະເຈົ້າ. ຄືເປັນລູກທີ່ບໍ່ໄດ້ເກີດຈາກການ ສືບເຊື້ອສາຍຕາມທຳມະຊາດ ຫລື ຄວາມຕ້ອງການຂອງມະນຸດ ຫລື ຈາກຄວາມຕ້ອງການຂອງຜົວ, ແຕ່ເກີດຈາກພຣະເຈົ້າ.

*ໂຢຮັນ 1:12-13*

ເຮົາບອກພວກເຈົ້າຕາມ
ຄວາມຈິງວ່າ,
ຜູ້ໃດກໍຕາມຟັງຄຳຂອງເຮົາ
ແລະ ເຊື່ອພຣະອົງຜູ້ໃຊ້ເຮົາມາ
ຜູ້ນັ້ນກໍມີຊີວິດນິລັນດອນ
ແລະ ຈະບໍ່ເຂົ້າໃນການພິພາກສາ,
ແຕ່ໄດ້ຜ່ານພົ້ນຈາກ
ຄວາມຕາຍໄປສູ່ຊີວິດແລ້ວ.

*ໂຢຮັນ 5:24*



ເພາະພຣະເຈົ້າຮັກໂລກຈົນ
ໄດ້ມອບພຣະບຸດອົງດຽວຂອງ
ພຣະອົງ ເພື່ອທຸກຄົນທີ່ເຊື່ອໃນ
ພຣະບຸດນັ້ນຈະ
ບໍ່ຈິບຫາຍ ແຕ່ມີຊີວິດອັນ
ຕະຫລອດໄປເປັນນິດ.

*ໂຢຮັນ 3:16*

ແຕ່ຍ້ອນການບາບຂອງພວກ
ເຮົານັ້ນທ່ານຈຶ່ງໄດ້ຮັບບາດເຈັບ
ຖືກຂ້ຽນຖືກຕີຍ້ອນ
ການຊົ່ວຮ້າຍຂອງພວກເຮົາ.
ພວກເຮົາໄດ້ຮັບການປິ່ນປົວ
ໃຫ້ດີ ຍ້ອນໂທດກຳທີ່ທ່ານຮັບ
ດີປົກກະຕິຍ້ອນການຕີບຕີທີ່
ທ່ານຮັບເອົາ.

*ເອຊາຢາ 53:5*



ເຮົາຢູ່ທີ່ນີ້! ເຮົາຢືນເຄາະຢູ່ທີ່ປະຕູ.
ຖ້າຜູ້ໃດໄດ້ຍິນສຽງຂອງເຮົາ ແລະ
ເປີດປະຕູ, ເຮົາຈະເຂົ້າໄປ ແລະ ຈະ
ຮັບປະທານອາຫານກັບຜູ້ນັ້ນ ແລະ
ລາວຈະຮັບປະທານກັບເຮົາ.

*ພຣະນິມິດ 3:20*

ເພື່ອວ່າພຣະຄຣິດເຈົ້າຈະສະຖິດ
ຢູ່ໃນໃຈຂອງພວກເຈົ້າໂດຍທາງ
ຄວາມເຊື່ອ. ແລະ ເຮົາອະທິຖານວ່າ,
ເມື່ອພວກເຈົ້າໄດ້ວາງຮາກລົງ ແລະ
ຕັ້ງໝັ້ນຄົງໃນຄວາມຮັກແລ້ວ,

*ເອເຟໂຊ 3:17*

ດ້ວຍວ່າ ບຸດມະນຸດໄດ້ມາເພື່ອ
ຊອກຫາ ແລະ ຊ່ອຍຄົນທີ່ຫລົງ
ຫາຍໃຫ້ລອດພົ້ນ".

*ລູກາ 19:10*

ຄົນເຫລົ່ານັ້ນທັງໝົດທີ່ພຣະບິດາ
ເຈົ້າມອບໃຫ້ແກ່ເຮົາກໍຈະມາຫາເຮົາ
ແລະ ຜູ້ໃດກໍຕາມທີ່ມາຫາເຮົາ
ເຮົາຈະບໍ່ຂັບໄລ່ໄປຈັກເທື່ອ.

*ໂຢຮັນ 6:37*



'ເຊີນມາ, ເພາະບັດນີ້ທຸກຢ່າງກໍ
ຕຽມພ້ອມແລ້ວ'.

*ລູກາ 14:17*

"ທ່ານເອີຍ, ຂ້ານ້ອຍຈະ
ຕ້ອງເຮັດຢ່າງໃດຈຶ່ງຈະ
ໄດ້ຮັບຄວາມພົ້ນ?"
"ຈົ່ງເຊື່ອໃນພຣະເຢຊູເຈົ້າ
ອົງພຣະຜູ້ເປັນເຈົ້າ
ແລ້ວເຈົ້າກັບຄົວເຮືອນຂອງ
ເຈົ້າຈະໄດ້ຮັບຄວາມພົ້ນ".

*ກິດຈະການ 16:30-31*

ຜູ້ທຳນວາຍທັງໝົດກໍຢືນຢັນ
ກ່ຽວກັບພຣະອົງວ່າ, ທຸກຄົນທີ່ເຊື່ອ
ໃນພຣະອົງຈະໄດ້ຮັບການໃຫ້ອະໄພ
ບາບຜ່ານທາງນາມຂອງພຣະອົງ"

*ກິດຈະການ 10:43*

ພຣະເຢຊູເຈົ້າໄດ້ຖືກມອບໄວ້ໃຫ້
ເຖິງແກ່ຄວາມຕາຍເພາະ
ບາບກຳຂອງພວກເຮົາ ແລະ
ໄດ້ຄືນມາມີຊີວິດເພື່ອ
ໃຫ້ພວກເຮົາເປັນຜູ້ຊອບທຳ.

*ໂຣມ 4:24-25*



ເຫດສະນັ້ນ ບັດນີ້ຈຶ່ງບໍ່ມີ
ການລົງໂທດແກ່ບັນດາຜູ້ທີ່ຢູ່ໃນ
ພຣະເຢຊູຄຣິດເຈົ້າ.

*ໂຣມ 8:1*

ເຮົາຂຽນຂໍ້ຄວາມເຫລົ່ານີ້
ມາເຖິງພວກເຈົ້າທັງຫລາຍທີ່
ເຊື່ອໃນນາມຂອງພຣະບຸດຂອງ
ພຣະເຈົ້າ ເພື່ອວ່າພວກເຈົ້າຈະ
ໄດ້ຮູ້ວ່າພວກເຈົ້າມີຊີວິດນິລັນດອນ.

*1 ໂຢຮັນ 5:13*

"...ແຕ່ຈົ່ງຍິນດີ ເພາະ
ຊື່ຂອງພວກເຈົ້າຖືກຈົດ
ໄວ້ແລ້ວໃນສະຫວັນ".

*ລູກາ 10:20*

ເຫດສະນັ້ນ, ເມື່ອພວກເຮົາ
ໄດ້ຖືກນັບເປັນຜູ້ຊອບທຳໂດຍ
ຄວາມເຊື່ອແລ້ວ, ພວກເຮົາ
ຈຶ່ງມີສັນຕິສຸກກັບພຣະເຈົ້າ
ໂດຍທາງພຣະເຢຊູຄຣິດເຈົ້າ
ອົງພຣະຜູ້ເປັນເຈົ້າຂອງພວກເຮົາ,

*ໂຣມ 5:1*



ດ້ວຍວ່າ ພວກເຈົ້າໄດ້ຮັບ
ຄວາມພົ້ນນັ້ນກໍໂດຍພຣະຄຸນຜ່ານ
ທາງຄວາມເຊື່ອ ແລະ ຄວາມລອດ
ພົ້ນນີ້ບໍ່ໄດ້ມາຈາກພວກເຈົ້າເອງ,
ແຕ່ເປັນຂອງປະທານຈາກພຣະເຈົ້າ
ບໍ່ແມ່ນໂດຍການປະຕິບັດ, ດັ່ງນັ້ນ
ເພື່ອວ່າບໍ່ໃຫ້ຜູ້ໃດສາມາດອວດໄດ້.

*ເອເຟໂຊ 2:8-9*

ໂມທະນາຂອບພຣະຄຸນພຣະເຈົ້າ
ສຳລັບຂອງປະທານຂອງພຣະອົງ
ເຊິ່ງເກີນທີ່ຈະພັນລະນາໄດ້.

*2 ໂກຣິນໂທ 9:15*

ແຕ່ຖ້າພວກເຮົາເດີນຢູ່ໃນ
ຄວາມສະຫວ່າງເໝືອນດັ່ງພຣະອົງ
ຢູ່ໃນຄວາມສະຫວ່າງ, ພວກເຮົາກໍ
ຮ່ວມສາມັກຄີທຳດ້ວຍກັນ ແລະ
ໂລຫິດຂອງພຣະເຢຊູເຈົ້າ ພຣະບຸດ
ຂອງພຣະອົງກໍຊຳລະພວກເຮົາ
ຈາກຄວາມບາບທັງໝົດ.

*1 ໂຢຮັນ 1:7*



ແກະຂອງເຮົາກໍຟັງສຽງຂອງເຮົາ,
ເຮົາຮູ້ຈັກແກະນັ້ນ ແລະ
ແກະນັ້ນກໍຕິດຕາມເຮົາ.
ເຮົາໃຫ້ຊີວິດນິລັນດອນແກ່ແກະ
ນັ້ນ ແລະ
ແກະນັ້ນຈະບໍ່ຈິບຫາຍຈັກເທື່ອ,
ບໍ່ມີຜູ້ໃດຍາດເອົາແກະນັ້ນອອກໄປ
ຈາກມືຂອງເຮົາໄດ້.

*ໂຢຮັນ 10:27-28*

ພຣະອົງເອີ້ນພວກເຈົ້າມາສູ່
ສະພາບການຢ່າງນີ້ແຫລະ ເພາະວ່າ
ພຣະຄຣິດເຈົ້າໄດ້ທົນທຸກເພື່ອພວກ
ເຈົ້າ, ວາງແບບຢ່າງໄວ້ໃຫ້ພວກເຈົ້າ
ເຊິ່ງພວກເຈົ້າຄວນດຳເນີນຕາມ
ຮອຍຕີນຂອງພຣະອົງ.

*1 ເປໂຕ 2:21*



"ແລະ ແນ່ນອນ ເຮົາຈະຢູ່ກັບ
ພວກເຈົ້າທັງຫລາຍທຸກໆວັນ
ຈົນສິ້ນຍຸກ".

*ມັດທາຍ 28:20*

ໃນທຳນອງດຽວກັນ,
ຈົ່ງໃຫ້ຄວາມສະຫວ່າງທີ່ຢູ່ໃນ
ພວກເຈົ້ານັ້ນສ່ອງແຈ້ງຕໍ່ໜ້າຄົນ
ທັງຫລາຍ ເພື່ອວ່າພວກເຂົາຈະ
ເຫັນຄວາມດີທີ່ພວກເຈົ້າໄດ້ເຮັດ
ແລະ ສັນລະເສີນພຣະບິດາເຈົ້າຂອງ
ພວກເຈົ້າຜູ້ທີ່ສະຖິດຢູ່ໃນສະຫວັນ.

*ມັດທາຍ 5:16*

ຜູ້ໃດກໍຕາມອັບອາຍໃນເລື່ອງເຮົາ
ແລະ ຖ້ອຍຄຳຂອງເຮົາ, ບຸດມະນຸດ
ກໍຈະອັບອາຍໃນເລື່ອງຜູ້ນັ້ນເມື່ອ
ພຣະອົງມາດ້ວຍສະຫງ່າລາສີຂອງ
ພຣະອົງ ແລະ ສະຫງ່າລາສີຂອງ
ພຣະບິດາເຈົ້າພ້ອມທັງສະຫງ່າລາສີ
ຂອງບັນດາເທວະດາບໍລິສຸດ.

*ລູກາ 9:26*



"ຖືກແລ້ວ ຕົ້ນຫຍ້າຫ່ຽວແຫ້ງ
ດອກໄມ້ຫລ່າເຫລືອງ
ແຕ່ຖ້ອຍຄຳຂອງພຣະເຈົ້າຂອງ
ພວກເຮົາກໍດຳລົງຢູ່ຕະຫລອດໄປ
ເປັນນິດ."

*ເອຊາຢາ 40:8*

ຟ້າ ແລະ ດິນຈະລ່ວງພົ້ນໄປ
ແຕ່ຖ້ອຍຄຳຂອງເຮົາຈະ
ບໍ່ລ່ວງພົ້ນໄປຈັກເທື່ອ.

*ລູກາ 21:33*

ຢ່າກະວົນກະວາຍໃນສິ່ງໃດເລີຍ,
ແຕ່ໃນທຸກສະຖານະການ ຈົ່ງຂໍ
ທຸກສິ່ງທີ່ພວກເຈົ້າປາຖະໜານັ້ນ
ຕໍ່ພຣະເຈົ້າ ດ້ວຍການອະທິຖານ
ແລະ ອ້ອນວອນ ພ້ອມກັບ
ການຂອບພຣະຄຸນ.
ແລ້ວສັນຕິສຸກຂອງພຣະເຈົ້າທີ່ເກີນ
ຄວາມເຂົ້າໃຈທັງໝົດຈະເຝົ້າຮັກສາ
ຈິດໃຈ ແລະ ຄວາມຄິດຂອງພວກ
ເຈົ້າທັງຫລາຍໄວ້ໃນພຣະເຢຊູຄຣິດ.

*ຟີລິບປອຍ 4:6-7*



ພຣະເຈົ້າຍາເວໄດ້ປາກົດແກ່
ພວກເຂົາ ຈາກແດນໄກ.
ຊາດອິດສະຣາເອນເອີຍ ເຮົາ
ຮັກແພງເຈົ້າສະເໝີມາ.
ດັ່ງນັ້ນ ເຮົາຈຶ່ງສືບຕໍ່ໃຫ້ຄວາມຮັກ
ອັນໝັ້ນຄົງແກ່ເຈົ້າ.

*ເຢເຣມີຢາ 31:3*

ເພາະເຮົາຢູ່ກັບພວກເຈົ້າ
ສະນັ້ນ ຢ່າສູ່ຍ້ານກົວ.

*ເອຊາຢາ 41:10*

"ໃນຜາສາດຂອງພຣະບິດາ
ເຈົ້າຂອງເຮົາມີຫ້ອງຢູ່ຫລວງຫລາຍ;
ຖ້າບໍ່ມີເຮົາຄົງໄດ້ບອກພວກເຈົ້າ
ແລ້ວ ເຮົາກຳລັງໄປບ່ອນນັ້ນ ເພື່ອ
ຈັດຕຽມບ່ອນໄວ້ສຳລັບພວກເຈົ້າ,
ແລະ ເມື່ອເຮົາໄປຈັດຕຽມບ່ອນໄວ້
ສຳລັບພວກເຈົ້າ,
ເຮົາຈະກັບຄືນມາຮັບເອົາພວກ
ເຈົ້າໄປຢູ່ກັບເຮົາເພື່ອວ່າເຮົາຢູ່ທີ່ໃດ
ພວກເຈົ້າກໍຈະຢູ່ທີ່ນັ້ນເໝືອນກັນ."

*ໂຢຮັນ 14:2-3*



ເພາະອົງພຣະຜູ້ເປັນເຈົ້າເອງ
ຈະລົງມາຈາກສະຫວັນດ້ວຍສຽງ
ຄຳສັ່ງດັງກ້ອງ ດ້ວຍສຽງແຫ່ງ
ອັກຄະເທວະດາ ແລະ ດ້ວຍສຽງແກ
ເອີ້ນຂອງພຣະເຈົ້າ ແລ້ວຜູ້ທີ່ຕາຍໃນ
ພຣະຄຣິດເຈົ້າຈະເປັນຄືນມາກ່ອນ.
ຫລັງຈາກນັ້ນ, ພວກເຮົາຜູ້ທີ່ຍັງມີ
ຊີວິດ ແລະ ຜູ້ທີ່ຍັງເຫລືອຢູ່ກໍຈະຖືກ
ຮັບຂຶ້ນໄປໃນເມກພ້ອມກັບຄົນເຫລົ່າ
ນັ້ນ ເພື່ອພົບກັບອົງພຣະຜູ້ເປັນເຈົ້າ
ໃນຟ້າອາກາດ ແລະ ເພື່ອວ່າພວກ
ເຮົາຈະຢູ່ກັບອົງພຣະຜູ້ເປັນເຈົ້າ
ຕະຫລອດໄປເປັນນິດ.

*1 ເທສະໂລນິກ 4:16-17*

ແລ້ວຂ້າພະເຈົ້າໄດ້ເຫັນ "ສະຫວັນ
ໃໝ່ ແລະ ແຜ່ນດິນໂລກໃໝ່".

*ພຣະນິມິດ 21:1*

ພຣະອົງຈະເຊັດນ້ຳຕາທຸກຢົດ
ຈາກຕາຂອງພວກເຂົາ.
ທີ່ນັ້ນຈະບໍ່ມີຄວາມຕາຍ'
ຫລື ຄວາມໂສກເສົ້າ ຫລື
ການຮ້ອງໄຫ້ ຫລື ຄວາມເຈັບປວດ
ອີກຕໍ່ໄປ, ເພາະລະບົບເກົ່າຂອງສິ່ງ
ຕ່າງໆໄດ້ຜ່ານພົ້ນໄປແລ້ວ.

*ພຣະນິມິດ 21:4*



'ເບິ່ງແມ່, ເຮົາຈະມາໃນໄວໆນີ້

*ພຣະນິມິດ 22:12*

ຜູ້ໃດຫິວນ້ຳໃຫ້ຜູ້ນັ້ນເຂົ້າມາ,
ແລະ ຜູ້ໃດທີ່ປາຖະໜາກໍ
ໃຫ້ຜູ້ນັ້ນມາຮັບເອົານ້ຳແຫ່ງຊີວິດ
ໂດຍບໍ່ຕ້ອງເສຍຄ່າ.

*ພຣະນິມິດ 22:17*

ອາແມນ. ພຣະເຢຊູເຈົ້າ
ອົງພຣະຜູ້ເປັນເຈົ້າ ຂໍມາເຖີດ.

*ພຣະນິມິດ 22:20*

ອ່ານພຣະຄຳພີ, ມັນແມ່ນພຣະຄຳ
ຂອງ ພຣະເຈົ້າ. ຟັງສຽງຂອງພຣະເຈົ້າ.
ພຣະເຈົ້າຜູ້ຊົງມີຊີວິດທີ່ຍິ່ງໃຫຍ່ມີ
ຄວາມເປັນຫ່ວງ ກ່ຽວກັບທ່ານ.
ພຣະອົງຢາກໃຫ້ທ່ານຮູ້ ຄວາມຮັກ
ຂອງພຣະອົງ. ໃນພຣະຄຳຂອງ
ພຣະອົງ,ພຣະອົງຊົງສະແດງໃຫ້ເຫັນ
ທາງສູ່ການພັກຜ່ອນທີ່ແທ້ຈິງ, ສູ່ຕົວຈິງ
ຄວາມສຸກ ແລະ ສັນຕິພາບ.

ຖ້າທ່ານມີຄຳຖາມໃດ, ກະລຸນາຢ່າລັງເລ
ທີ່ຈະຕິດຕໍ່ຫາ ພວກເຮົາ ມີຄວາມຍິນດີ
ທີ່ຈະຕອບຄຳຖາມຂອງທ່ານໃຫ້ເຂົາເຈົ້າ.

*Pure Gold*

GBV 203 4120 Laotian/Lao